# ໂຄງການ ການເມືອງ - ຂອງລາວຍຸກໃໝ່ ມີດັ່ງນີ້

ການເມືອງລາວຍຸກໃໝ່ ໃນຣະບອບປະຊາທິປະໄຕ ອັນມີຊາດ ສາສນາ ພຣະມຫາກະສັດແລະປະຊາຊົນເປັນເຈົ້າ

## ປະກອບຄວາມຄິດແລະທັສນະພື້ນຖານກຽ່ວກັບ ໂຄງການ ການເມືອງ -ຂອງລາວຍຸກໃໝ່ ມີດັ່ງນີ້

-1- ຂບວນການການເມືອງສວ່ນປະຊາຊົນ ຄືກຳລັງຣວ່ມຂອງປະຊາຊົນຊາວລາວໃນຮູບຂອງຂບວນການການເມືອງສວ່ນປະຊາຊົນ ເປັນກຳລັງຫລັກ ຫຣືກຳລັງແຂງແກ່ນ ໃນການນຳໄປສູ່ການປຽ່ນແປງທາງການເມືອງຄັ້ງໃຫ່ຽນີ້

-2-ຂບວນການລາວອິສຣະ ເພື່ອປະຊາທິປະໄຕເປັນອົງກອນຈັດຕັ້ງ ຂອງຂບວນການ ການເມືອງສວ່ນປະຊາຊົນ ໄດ້ກໍ່ຕັ້ງຂື້ນເມື່ອວັນທີ-25-5-ປີ-00-ທຳໜ້າທີ່ເປັນແກ່ນນຳ ການເຄື່ອນໃຫວທາງການເມືອງ ຂອງຂບວນການ ການເມືອງສວ່ນປະຊາຊົນທັງໃນປະເທດແລະຕາ່ງປະເທດ-

ສະມາຊິກປະຊາຊົນແຫ່ງປະເທດລາວ ເປັນອົງກອນຕໍ່ເນື່ອງຂອງຂບວນການລາວອິສຣະເພື່ອປະຊາທິປະໄຕ-ໄດ້ກໍ່ຕັ້ງຂື້ນຢາ່ງເປັນທາງການ ຮັບຜິດຊອບຈັດຕັ້ງສາ້ງສະມາຊິກທົ່ວທັງໃນປະເທດແລະຕາ່ງປະເທດ ເພື່ອສນັບສນູນການເຄື່ອນໃຫວ ທີ່ນຳໂດຍຂບວນການລາວອິສຣະເພື່ອປະຊາທິປະໄຕ

-3-ເອກລັກຂອງຂບວນການ ການເມືອງສວ່ນປະຊາຊົນນີ້ ຄືມີຄວາມເປັນອິສຣະເປັນຕົວຂອງຕົວເອງ ທັງທາງຄວາມຄິດແລະການປະຕິບັດ ຕອ້ງເອົາທັມນຳໜາ້ໄຊ້ຫົວຄິດແລະປັນຍາເປັນອາວຸດ ຍືດໃນຫລັກສາມັກຄີກັບທຸກພາກສວ່ນທີ່ຍືດໝັ້ນໃນຄວາມກືກຕອ້ງອັນດີງາມ

ແນວທາງໃນການທຳງານ ຂອງຂບວນການລາວອິສຣະເພື່ອປະຊາທິປະໄຕແລະເພື່ອສາ້ງເສີມອຳນາດຂອງສວ່ນປະຊາຊົນໃຫ້ໃຫ່ຽໂຕ ຣວ່ມທັງເສີມສາ້ງຄຸນຄາ່ ຄຸນສົມບັດ ເອກລັກຂອງຂບວນການ ການເມືອງຂອງສວ່ນປະຊາຊົນ ມີໜາ້ທີ ດັ່ງນີ້

(ກ)ຈູດໄຟໃຊ້ປັນຍາ ທໍາໃຫ້ມວນຊົນຫູແຈ້ງຕາສວ່າງ



(ຂ)ເອົາທັມນໍາໜ້າ ຍຶດໝັ້ນໃນສິ່ງທີ່ຖືກຕ້ອງ ແບ່ງຜິດແບ່ງຖືກ ແບ່ງມິດແລະສັດຕຣູ ທໍາໃນສິ່ງທີ່ດີງາມແລະຖືກຕ້ອງສະເໝີ ຖືເອົາພົນປະໂຍດຂອງສ່ວນຣວມ ເອົາປະເທດຊາດ ເອົາປະຊາຊົນເປັນທີ່ຕັ້ງ

(ຄ)ຍຶດຫລັກສັມມາ ຍຶດໝັ້ນໃນສັດຈະທັມ ຄວາມຈິງທີ່ຊອບ-ທັງຄິດ ທັງເວົ້າ ທັງເຮັດ ໂດຍເຣີ້ມຕົ້ນຈາກຄວາມເປັນຈິງທີ່ເຮົາເປັນຢູ່ ທີ່ເຮົາກໍາລັງມີສ່ວນຮ່ວມ ໃນການປ່ຽນແປງ ມຸ້ງອີງຕໍ່ສັດຈະທັມ ຫລືແກ່ນແທ້ ຂອງສິ່ງທີ່ເຮົາກໍາລັງທໍາການປ່ຽນແປງ

-4-ຍຸທສາດ ຍຸທວິທີ-ຍຸທສາດສໍາຄັນຄື-ຣຸກ-ຍັນ-ຣຸກ-ພ້ອມກັບດໍາເນີນຍຸທວິທີຢ່າງຍຶດຫຍຸ່ນພິກໄຫວຕາມສະພາວະການໃນຮູບທັມ

**ເປົ້າໝາຍອັນສໍາຄັນ ຫລັກໆ ມີຄື**

(ກ)ຊ່ວງຊີງໄຊຊະນະໃນທຸກໆຂັ້ນຕອນ
(ຂ)ສ້າງສົມໄຊຊະນະ ພັທນາຂບວນການ ຂຍາຍອໍານາດຂອງສ່ວນປະຊາຊົນ ໃນທ່າມກາງການບັ່ນທອນ ອໍານາດຝ່າຍຕົງກັນຂ້າມ
(ຄ)ສ້າງການຍອມຮັບອໍານາດປະຊາຊົນ ໃນກຸ່ມພົນປະໂຍດແລະອໍານາດອື່ນໆ ທັງໃນແລະນອກຣະບົບໂຄງການອໍານາດ

-5-ການປ່ຽນແປງປະເທດລາວ ໝາຽເຖິງປະເທດລາວໄດ້ກ້າວມາເຖິງ ການປ່ຽນທາງປະວັດສາດຄັ້ງສໍາຄັນແລ້ວ ອໍານາດການເມືອງຊຶ່ງເປັນຕົວແປສໍາຄັນ ໃນການຂັບເຄື່ອນສັງຄົມລາວຈະຖືກປ່ຽນກ່າຍຈາກມື ຂອງກຸ່ມສາມານຜເດັດການໃນຣະບອບຄອມມິນິສວຽດນາມ ມາເຂົ້າສູ່ມືຂອງປະຊາຊົນຢ່າງແທ້ຈິງ ທັງນີ້ເປັນພົນຈາກ ຄື
(ກ)ເປັນພົນສືບເນື່ອງມາຈາກການປະສົມປະສານກັນ ຂອງເງື່ອນໄຂພາວະວິສັຍຊຶ່ງກໍ່ຄືການສ້າງສົມທາງປະວັດສາດ ເປີດທາງໃຫ້ສ່ວນປະຊາຊົນກ້າວຂຶ້ນສູ່ເວທີປະວັດສາດ ໃນການະ-ແລະເຈົ້າຂອງປະເທດ ສ້າງການປ່ຽນແປງໃຫ້ແກ່ປະເທດຊາດ ຕໍ່ຈາກກຸ່ມທະຫານແນວລາວແດງ ແລະກຸ່ມທຶນຜເດັດການຄອມມິນິສວຽດນາມ
(ຂ)ປັດຈັຍທາງອັດຕະວິສັຍພ້ອມ ເກີດຜູ້ນໍາແລະກຸ່ມຜູ້ນໍາອີງກອນຜູ້ນໍາການເມືອງ

ເຄື່ອນໄຫວທີ່ມີຈຸດຢືນຈັດເຈນ ຍຸທສາດຖືກຕ້ອງ ບຸກຄະລິກແລະວິທີການທຳງານທີດີ



-6-ການເມືອງລາວຍຸກໃໝ່ ຄືກະບວນການສ້າງສົມອຳນາດຂອງປະຊາຊົນ ເກີດຂື້ນແລະພັທນາເຕີບໃຫ່ຽໃນກ້ຳມກາງການຕໍ່ສູ້ເອົາຊະນະ ຣົບລ້າງການເມືອງເກົ່າຂອງກຸ່ມທຶນສາມານຜເດັດການໃນຣະບອບຄອມມີນິສວຽດນາມ

ການເມືອງລາວຍຸກໃໝ່ ໝາຽເຖິງອຳນາດຂອງສັງຄົມຕົກຢູ່ໃນມືຂອງປະຊາຊົນຊຶ່ງກໍ່ຄືຂບວນການການເມືອງສວ່ນປະຊາຊົນນຳໂດຍຂບວນການລາວອິສຣະ ເພື່ອປະຊາທິປະໄຕ ເປັນປັດຈັຍກຳໝົດທິດທາງການເມືອງຂອງປະເທດລາວ ແລະເປັນຫຼັກປະກັນໃຫ້ການໃຊ້ອຳນາດ ຂອງຄະນະຜູ້ບໍຣິຫານປະເທດແລະເຈົ້າໝ້າທີ່ຣັຖ ຕຣອດເຖິງຂ້າຣາຊການດຳເນີນໄປໃນຄອງທີ່ຍັງປະໂຍດສູງສຸດ ແກ່ປະເທດຊາດແລະປະຊາຊົນລາວ

ຫົວໃຈຂອງການເມືອງລາວຍຸກໃໝ່ ຄືປະຊາຊົນເປັນເຈົ້າພາບໂດຍຂບວນການການເມືອງສວ່ນປະຊາຊົນ ທີ່ມີຂບວນການລາວອິສຣະເພື່ອປະຊາທິປະໄຕເປັນແກ່ນນຳ

ພາຣະກິດພື້ນຖານ-ຂອງການເມືອງລາວຍຸກໃໝ່ນີ້ ຄືການຈູດໄຟໃຊ້ປັນຍາຕິດອາວຸດທາງຫົວຄິດແລະປັນຍາໃຫ້ມວນຊົນ ແລ້ວເສີມສ້າງອຳນາດປະຊາຊົນທ່າມກາງການເຄື່ອນໄຫວເປີດປົ່ງ ຕຣວດສອບຣະງັບຢັບຢັ້ງ ພຶດຕິກັມທຸຈະຣິດໂກງກິນຂາຍຊາດຂາຍແຜ່ນດິນຂອງຣັຖບານຮຸ່ນວຽດນາມ ແລ້ວໂຈມຕີຣະບອບຄອມມິນິສ ມາຕໍ່ສູ້ເອົາຊນະການປິດລ້ອມຂອງໂຄງການອຳນາດຣັຖ
ໃນການຄວບຄຸມຂອງຣັຖບານຮຸ່ນວຽດນາມເປັນຕົ້ນ

(7)ຈູດໄຟໃຊ້ປັນຍາ ເອົາທັມນຳໝ້າ ດວ້ຍສັນຕິວິທີ ອາຣະຍະຂັດຂືນ ຄືເນື້ອຫາສາຣະຂອງການດຳເນີນຍຸດທະສາດຫຼັກ ໃນການເຄື່ອນໄຫວຕໍ່ສູ້ເສີມສ້າງອຳນາດສວ່ນປະຊາຊົນ ຂຍາຍພື້ນຖານມວນຊົນຂອງຂບວນການລາວອິສຣະເພື່ອປະຊາທິປະໄຕ

ທັມ-ຍອ່ມຊນະ-ອະທັມ-ກັມຕົກດວ້ຍຜູ້ກະທັມ-ຄືຄຳຂວານໃນການຕໍ່ສູ້ ຂອງຂບວນການ ການເມືອງສວ່ນປະຊາຊົນນຳໂດຍຂບວນການລາວອິສຣະ ເພື່ອປະຊາທິປະໄຕ ທັງນີ້ ໃນການຕໍ່ສູ້ເພື່ອປຽ່ນແປງປະເທດລາວຄັ້ງຍຸກໃໝ່ນີ້ ເສັ້ນທາງແບ່ງຣະຫວ່າງ-ເຮົາກັບ-ສັດຕຣູ-ຄື-ທັມ-ອະທັມ-ຖືກ-ຜິດ-ດີ-ຊົ່ວ-ສວ່ນຣວມ-ສວ່ນຕົວ-ບໍ່ມີ-ຊ້າຍ-ຂວາ

ກ້າວໜ້າ-ລ້າຫລັງ-ຣວຍ-ຈົນ-ເມືອງ-ຊົນນະບົດ-ນາຍຈ້າງ-ລູກຈ້າງ-ນາຍ-ບ່າວ



ປະຊາຊົນເປັນຫຼັກຄ້ຳ ໝາຍເກີງຂບວນການປຽນແປງທາງການເມືອງ ຄັ້ງຍຸກໃໝ່ຂອງປະເທດລາວ ໂດຍຂບວນການ ການເມືອງສວ່ນປະຊາຊົນ ນຳໂດຍຂບວນການລາວອິສຣະເພື່ອປະຊາທິປະໄຕ ທຳໜ້າທີ່ເປັນເຈົ້າພາບ ປະຕິບັດພາຣະກິດທີ່ປະວັດສາດມອບໝາຍໃຫ້

(8)ອະດິຄິດຂອງປະຊາຊົນ ໝາຍເກີງສະກາບິໂທຣະທັດແລະເວັບໄຊ ຂອງລາວເສຣີຊົນ ທັງວິທະຍຸແລະໜັງສືພິມຕາ່ງ ໆ ໃນເຄືອຄາ່ຍໜັງສືພິມລາວເສຣີຊົນ ລາວຣວ່ມເສຣີພາບ-ຊື່ງໄດ້ສະແດງບົດບາດສຳຄັນຍິ່ງ ໃນການເຄື່ອນໄຫວຂອງການປຽນແປງທາງການເມືອງຄັ້ງສຳຄັນນີ້ ເປັນຕົວເຊື່ອມຂໍ້ມູນຂາ່ວສານແລະຄວາມຄິດພຶດຕິເກີງໃນປະຊາມະຫາຊົນ ທັງໃນປະເທດແລະຕາ່ງປະເທດ ສາ້ງການປຽນແປງທາງຄວາມຄິດແລະປັນຍາໃຫ້ແກ່ສັງຄົມລາວ ຢາ່ງມີຂໍ້ຄວາມເນື້ອໃນອັນສຳຄັນ

(9)ພາຣະກິດທາງປະວັດສາດ ຄືການປະຕິຮູບການເມືອງໃນຣະບອບປະຊາທິປະໄຕອັນມີຊາດ ສາສນາ ພຣະມະຫາກະສັດແລະປະຊາຊົນເປັນເຈົ້າລົບລາ້ງການເມືອງການເລືອກຕັ້ງຂອງກຸ່ມອະພິສິດຊົນ ແຫລ່ງຜລິດກຸ່ມການເມືອງທີ່ມຸ້ງຫວັງໄຊອຳນາດ ເພື່ອຜົນປະໂຍດສວ່ນຕົນ ສະການປານາການເມືອງ ທີ່ເປັນປະຊາທິປະໄຕຂອງປະຊາຊົນແທ້ໆນີ້ຢາ່ງບໍ່ຂາດສາຍ ຂັບເຄື່ອນກະບວນການພັທນາທາງການເມືອງ-ເສຖກິດ-ສັງຄົມທຳໃຫ້ປະເທດລາວກາ້ວໄປສູ່ ຄວາມເປັນປະເທດລາວຍຸກໃໝ່ທີ່ຈະ ຈະເຣີນຮຸ່ງເຮືອງກ້າວໜ້າຢາ່ງຮອບດາ້ນ ແລ້ວປະຊາຊົນຕອ້ງຢູ່ເຢັນເປັນສຸກຢາ່ງແທ້ຈິງ

ໃນໂຄງການນີ້ ຂບວນການ ການເມືອງສວ່ນປະຊາຊົນ ນຳໂດຍຂບວນການລາວອິສຣະເພື່ອປະຊາທິປະໄຕ ຈະທຳໜ້າທີ່ຂອງການເປັນເຈົ້າພາບ ເຈົ້າສັດທາ-ຕອ້ງທຳການ-ລາ້ງການເມືອງເກົ່າ ແລ້ວຕອ້ງສາ້ງການເມືອງລາວຍຸກໃໝ່ ມີດັ່ງນີ້

-ກ-ສາ້ງອຳນາດຂອງປະຊາຊົນໃຫ້ເປັນທີ່ເພິ່ງທີ່ອາສັຍ
-ຂ-ຕອ້ງຂຍາຍການອຳນາດຂອງປະຊາຊົນໃຫ້ກວາ້ງຂວາງ
-ຄ-ຕອ້ງຍົກອຳນາດຂອງປະຊາຊົນ ເຂົ້າສູ່ຄວາມເປັນຜູ້ນຳທາງການເມືອງ

ລ້າງການເມືອງເກົ່າແລະສ້າງການເມືອງລາວຍຸກໃໝ່-



ຕໍ່ໂຄງການອຳນາດ-ຣັຖ-ເຊັ່ນ-ຣັຖບານ-ສະພາ-ສານ-ອົງກອນອິສຣະ-ກອງທັບ-ຂ້າຣາຊການ ແລະຕໍ່ກຸ່ມອຳນາດອື່ນໆ ເຊັ່ນ ກຸ່ມທຶນ ຊື່ ເປັນຕົ້ນທາງໂດຍຕົງແລະທາງອ້ອມ

(10)ຫລັກປະກັນໄຊຊະນະ ໃນການເຄື່ອນໄຫວການປຽ່ນແປງທາງການເມືອງ ກຳຈັດການເມືອງແບບເກົ່າ ສ້າງການເມືອງແບບຍຸກໃໝ່ໃນຄັ້ງນີ້-ຢູ່ທີ່-ການຜູ້ນຳທີ່ຖືກຕ້ອງແນວທາງທີ່ຊັດເຈນ ມວນຊົນໄດ້ເຂົ້າຮວ່ມດວ້ຍ ທົ່ວທັງປະເທດແລະໃນຕາ່ງປະເທດ

ຫລັກປະກັນໄຊຊະນະໃນການສ້າງອຳນາດ ຂອງປະຊາຊົນ ການຂະຫຍາຍການອຳນາດຂອງປະຊາຊົນ ແລະການຍົກຣະດັບອຳນາດຂອງປະຊາຊົນ ເຂົ້າສູ່ຄວາມເປັນອຳນາດຜູ້ນຳທາງການເມືອງ ລ້າງການເມືອງເກົ່າແລະມາສ້າງການເມືອງຍຸກໃໝ່ປະກອບກວ້ຍ

(1)ແນວຄິດ ແນວທາງ ຍຸດທະສາດ ຍຸດທະວິທີ ແລະການເປັນຜູ້ນຳ ຂອງຄນະຜູ້ນຳ ໃນຂບວນການລາວອິສຣະ ເພື່ອປະຊາທິປະໄຕ

(2)ຄວາມເຂັ້ມແຂງ ຂອງຄນະຜູ້ເຮັດວຽກໃນທຸກແນວຮົບ ທັງໃນສວ່ນກາງແລະໃນພູມີພາກ

(3)ໃນການເຂົ້າຮວ່ມ ແລະການໃຫ້ການສນັບສນູນ ຂອງມວນຊົນ

(11)ອຳນາດຍຸກໃໝ່-ອຳນາດຜູ້ນຳຍຸກໃໝ່ນີ້ ທຳຄວາມເຂົ້າໃຈໄດ້ເປັນເບື້ອງຕົ້ນວາ່-ການປຽ່ນປະເທດລາວ-ຢູ່ທີ່ການປຽ່ນກາ່ຍ-ໃນອຳນາດຜູ້ນຳ ຈາກອຳນາດຜູ້ນຳເກົ່າ ທີ່ມີຢູ່ໃນມືຂອງກຸ່ມທຶນແລະອຳນາດ ປັດຈຸບັນຄືກຸ່ມທຶນສາມານຜເດັດການຣະບອບຄອມມິນິສວຽດນາມ ທີ່ມີຣັຖບານຫຸ່ນເລາວແດງເປັນຕົວແທນ-ມາເປັນອຳນາດຍຸກໃໝ່ ໃຫ້ມາຢູ່ໃນກັມມືຂອງປະຊາຊົນ ທີ່ມີຂບວນການ ການເມືອງສວ່ນປະຊາຊົນ ນຳໂດຍຂບວນການລາວອິສຣະ ເພື່ອປະຊາທິປະໄຕເປັນຕົວແທນ

(12)ອຳນາດຂອງປະຊາຊົນ-ອຳນາດຍຸກໃໝ່ຂອງປະຊາຊົນນີ້-ໝາຽເຖິງຂບວນການ ການເມືອງສວ່ນປະຊາຊົນທີ່ນຳໂດຍຂບວນການລາວອິສຣະ ເພື່ອປະຊາທິປະໄຕດຳເນີນການຕໍ່ສູ້ ຕິດອາວຸດທາງຫົວຄິດແລະປັນຍາໃຫ້ແກ່ມວນຊົນ

ຂຍາຍເຄືອຄ່າຍມວນຊົນຜູ້ຕື່ນຕົວຮູ້ສຶກ ເສີມສ້າງອຳນາດທາງການເມືອງ ສ່ວນປະຊາຊົນ ໃຫ້ປະສານກັບອຳນາດຣັຖຂອງຣັຖບານຫຸ່ນວຽດນາມ ຫັກລ້າງອຳນາດຣັຖຂອງຣັຖບານຫຸ່ນວຽດນາມ ໃນກໍຣະນີຮູບທັມຕ່າງ ໆຢ່າງຕໍ່ເນື່ອງ ໃຫ້ເປັນເສົາໄປສູ່ຍຸກໃໝ່ ຈາກການເມືອງເກົ່າໄປເປັນການເມືອງໃໝ່ ໃຫ້ເປັນຫົວໃຈຂອງການເມືອງລາວຍຸກໃໝ່  ທີ່ສອດຄ່ອງກັບພັທນາການທາງການເມືອງຂອງເອເຊັຽ ຈະສາມາດເອົາຊະນະອຳນາດພັກຣັຖກຸ່ມທຶນສາມານຜເດັດການວຽດນາມ
ໃນຄາບຣະບອບຄອມມິນິສວຽດນາມໄດ້ໃນທີ່ສຸດ

ສ່ວນອຳນາດຍຸກໃໝ່ນີ້ ມາຈາກປັນຍາຊົນຍຸກໃໝ່ຂອງລາວ-ໃນທັດສະໃໝ່ນີ້-ໃນຄ່ານິຍົມຍຸກໃໝ່ນີ້-ໃນການຜູ້ນຳຍຸກໃໝ່ນີ້-ໃນສີ່ແບບຍຸກໃໝ່ນີ້-ໃນມວນຊົນຍຸກໃໝ່ນີ້ໃນຄວາມສຳພັນຍຸກໃໝ່ນີ້-ໃນການຈັດຕັ້ງຍຸກໃໝ່ນີ້-ໃນຄຸນນະພາບຍຸກໃໝ່ນີ້(ຊຶ່ງຈະນຳໄປສູ່ການປັບຕົວໃໝ່ຂອງໂຄງການອຳນາດຣັຖ)(ກຸ່ມບຸກຄົນຜູ້ຢູ່ໃນສັງກັດໜ່ວຽວຽກງານຣາຊການ)ຂອງກຸ່ມຜົນປະໂຍດຕ່າງ ໆນອກວົງການຣາຊການ ທີ່ຈະຕ້ອງເລືອກທາງຍຸກໃໝ່ ໃຫ້ສອດຄ່ອງກັບທິດທາງການພັທນາຂອງອຳນາດຍຸກໃໝ່ ແຂ່ງກັບການດີ້ນຣົນຢ່າງຊິ້ນຫວັງ ຂວານໜີບີຜ່າຍຂອງກຸ່ມຕົວແທນອຳນາດເກົ່າ ພະຍາຍາມຫາທາງຢັບຢັ້ງຂັດຂວາງ ທຳລາຍກະບວນການພັທນາຂອງອຳນາດຜູ້ນຳຍຸກໃໝ່ທຸກວິທີທາງ

(13)ອຳນາດຜູ້ນຳຍຸກໃໝ່ນີ້ ຄືອຳນາດຍັ້ງຢືນ ຈະເຂົ້າແທນທີ່ອຳນາດຜູ້ເດີມ ຊຶ່ງເປັນອຳນາດເສື່ອມໃນຕົວ ບໍ່ສອດຄ່ອງກັບຍຸກສມັຍອຳນາດຜູ້ນຳໃໝ່ນີ້ເປັນອຳນາດຂອງປະຊາຊົນ ໂດຍຂບວນການການເມືອງສວນປະຊາຊົນ ທີ່ມີຂບວນການລາວອິສຣະເພື່ອປະຊາທິປະໄຕເປັນແກ່ນນຳ ກຳໜົດໃຫ້ທຸກຢ່າງຕ້ອງປ່ຽນໄປໃນທິດທາງທີ່ເອື້ອປະໂຍດແກ່ປະຊາຊົນສ່ວນໃຫ່ຽແລະແກ່ປະເທດຊາດ ຕ້ອງສ້າງຄວາມຈະເຣີນແກ່ຊາດບ້ານເມືອງ ສ້າງຄວາມຜາສຸກໃຫ້ແກ່ປະຊາຊົນ ຂອງສິ່ງທີ່ເປັນຕົວວັດ ຄືຄວາມທັນຍຸກທັນສມັຍ-ຂອງສັງຄົມໂລກຍຸກປັດຈຸບັນ ອັນໝາຽເຖິງວ່າ ປະເທດຊາດຈັກຕ້ອງຈະເຣີນຮຸ່ງເຮືອງໃນທຸກ ໆດ້ານໄດ້ ກໍ່ຕ້ອງແມ່ນປະຊາຊົນລາວມີຄວາມຮູ້ ມີປັນຍາແລະມີສິນທັມ ເປັນຫລັກຄຸນນະພາບຂອງສັງຄົມໂລກລາວຍຸກໃໝ່ຢ່າງແທ້ຈິງ

(14)ການສະຖາປະນາອຳນາດຜູ້ນຳຍຸກໃໝ່ນີ້ ກັບການດີ້ນຣົນຮັກສາ

ອຳນາດຜູ້ນຳເກົ່າ -ຂບວນການ ການເມືອງສ່ວນປະຊາຊົນ ດຳເນີນການສະກາປະນາ ອຳນາດຜູ້ນຳຍຸກໃໝ່ ດ້ວຍການຈູດໄຟໃຊ້ປັນຍາຕິດອາວຸດທາງຫົວຄິດແລະປັນຍາໃຫ້ແກ່ມວນຊົນ ໃນການປຸກຣະໂດມມວນຊົນນັກຮຽນນັກສຶກສາແລະຄຣູອາຈານໃຫ້ການສຶກສາໃນເຣື້ອງຕ່າງ ໆຕຣອດ -24-ຊົ່ວໂມງ ຜ່ານເຄື່ອງຂຍາຍອິນເຕີເນດແລະໜັງສືຂ່າວສານຕ່າງ ໆໃນຂອບເຂດທົ່ວທັງປະເທດແລະໃນຕ່າງປະເທດ ຄນະທີ່ກຸ່ມອຳນາດເກົ່າທີ່ຄວບຄຸມໂຄງການອຳນາດຣັກ ພະຍາຍາມຈັດສັນອຳນາດໃນຣະບົບ ໃຫ້ຢູ່ໃນການຄວບຄຸມຂອງພວກເຂົາ ໃຫ້ຫລາຽທີ່ສຸດເທົ້າທີ່ຈະຫລາຽໄດ້ ພ້ອມກັບສ້າງໂອກາດຕັກຕວງຜົນປະໂຍດເຂົ້າຕົວເອງຢູ່ຕຣອດເວລາ ຫຼືທີ່ເອີ້ນວ່າ -ຕົກິນ -ສເວີຍຜົນ ໃນທ້າມກາງວິກິດທີ່ຕົນກຳລັງຜຊີນຢູ່ -ໂລບຈົ່ນນ້ຳລາຍໄຫລອອກສຸດທ້າຍບໍ່ມີຫຍັງ

(15)ການດຳລົງຢູ່ຄອງອຳນາດຜູ້ນຳ ທາງການເມືອງໃນຣະຍະຜ່ານມາ ທີ່ອຳນາດເກົ່າກຳລັງຈະສູນຊິ້ນການະຜູ້ນຳ ແລ້ວອຳນາດຍຸກໃໝ່ກຳລັງຈະກ້າວຂຶ້ນມາເປັນອຳນາດຜູ້ນຳແທນ ຈະມີລັກສະນະເຊື້ອມໂຍງເປັນເຫດເປັນຜົນ ໃນຕົວເອງ ດັ່ງນີ້ ຄື

-ກ -ອຳນາດສວ່ນປະຊາຊົນ ຕອ້ງປະກອບດວ້ຍອົງກອນແກ່ນນຳຂອງກອງໜາ້ມວນຊົນຕອ້ງຕື້ນຕົວແລ້ວເປີດກວ້າງ ເປັນພລັງອາຣະຍະ -ໃຫ້ຜູ້ທຳງານ -ໂຄງການຣັກ ກຸ່ມຜົນປະໂຍດ ກຸ່ມອຳນາດປີກຍອ່ຍ(ຜູ້ຣວ່ມທຳ ຕອ້ງທຳຕາມແນວທາງກຳກັບ -ສນອງອຳນາດຂອງສວ່ນປະຊາຊົນ ຕາມບົດບາດແລະສະການະພາບ ຂອງຕົນ
ໃນສັງຄົມ -ສາທາຣະນະຊົນ -ຜູ້ຣັບ -ຜູ້ໄດ້ຣັບປະໂຍດ

-ຂ -ອຳນາດກຸ່ມທຶນ ປະກອບດວ້ຍກຸ່ມຜເດັດການຄອມມິນິສແລະຂຸມກຳລັງທຶນ ກຸ່ມລົ່ວລົ້ແລະສະໜຸນຫຸ່ນເກວ(ຜູ້ທຳ )ໂຄງການຣັກ ກຸ່ມຜົນປະໂຍດ ກຸ່ມອຳນາດປີກຍອ່ຍ -ຜູ້ຣວ່ມທຳແລະທຳການໂກງກິນ -ສາທາຣະນະຊົນ -ເປັນຜູ້ເສັຽຫາຍ

ໃນຣະຍະພ່ານມານີ້ ອຳນາດສອງສວ່ນນີ້ຈະດຳລົງຢູ່ ປະຊັນແລະບຽດຂັບກັນໄປມາຢ່າງເຂັ້ມຂັນ ແຕ່ໃນທີ່ສຸດແລ້ວອຳນາດສວ່ນປະຊາຊົນຈະຍິ່ງເຂັ້ມແຂງໃຫ່ຽໂຕ ແລະພົບໄຊຊະນະໃນທີ່ສຸດກ່ຽອ້ນປະຊາຊົນ

(16) ບົດບາດຂອງປັນຍາຊົນ ແລະນັກວິຊາການ ມີດັ່ງນີ້

-1-ປັນຍາຊົນຕ້ອງເປັນຜູ້ຮູ້ຜູ້ຕື່ນ ໃຫ້ຮູ້ວ່າຈະຕ້ອງເຮັດອັນໃດ ເຮັດຢ່າງໃດ ໄດ້ສອດຄ່ອງກັບຄວາມເປັນຈິງ ຖ້າລຳພັງມີແຕ່ຄວາມຮູ້ຍັງບໍ່ເອີ້ນວ່າເປັນ ປັນຍາຊົນ

-2-ຈະຮູ້ຈະຕື່ນໄດ້ ກໍ່ຕ້ອງ -ເຂົ້າຮ່ວມ-ເຂົ້າເຖິງ -ຄວາມຈິງໃນຣະດັບເບິກ ໆໃຫ້ທະລຸຜ່ານປະກົດການຄືຈັບກົດເກນໄດ້-ແລະຄົ້ນພົບ-ສັດຈະທັມສະເພາະ ທີ່ກຳໜົດກົດເກນ ແລະທິດທາງການຂັບເຄື້ອນຂອງສັງຄົມລາວ

-3-ຈະທຳໜ້າທີ່ຂອງຕົນໃຫ້ດີໆ ຄື-ສະທ້ອນ-ຄວາມຈິງເຫຼົ່ານັ້ນໄປສູ່ສາທາຣະນະຊົນ ດ້ວຍແງ່ມຸມມອງຕ່າງ ໆອະທິບາຍກົດເກນ ໃຫ້ເປັນທີ່ເຂົ້າໃຈຂອງມວນຊົນ

(17)ການເຂົ້າຮ່ວມ-ແລະເຂົ້າເຖິງ-ແກ່ນແທ້ໆ -ໃນສັດຈະທັມ-ໝາຽເຖິງການໄດ້ປະສົບປະການແທ້ໆ ໃນການຮັບຮູ້ທາງຄວາມຮູ້ສຶກ-ທາງອາຣົມ-ທາງຈິດໃຈ-ເພາະວ່າ ການປ່ຽນແປງທາງການເມືອງນີ້ ເປັນເຣື້ອງຂອງຄົນ ອັນເປັນຄົນສ່ວນໃຫ່ຽ ຫຼືມວນຊົນ ໂດຍແມ່ນຄົນເຮົາເປັນຜູ້ກະທຳ ມີສ່ວນຮ່ວມຢູ່ຕຣອດເວລາ ຈຶ່ງໜີບໍ່ພົ້ນເຣື້ອງອາຣົມ ແລະຈິດໃຈ ຄວາມເຊື່ອໝັ້ນໃນສັດທາ

ຈາກນີ້ໄປໄດ້ຂໍ້ສຣຸບໃນຣະດັບເຫດຜົນ-ສາມາດ-ເຂົ້າເຖິງ-ຄວາມຈິງໃນຣະດັບແກ່ນແທ້ ຜ່ານເລີຍປະກົດການເຂົ້າສູ່ແກ່ນໆ ທາດແທ້ຂອງບັນຫາ ໃຫ້ເຂົ້າເຖິງ ສັດຈະທັມ-ຫຼື ຄຳຕອບ ທີ່ສະທ້ອນກົດເກນສະເພາະຂອງປະເທດລາວ-ນັ້ນກໍ່ຄື-ການເມືອງຍຸກໃໝ່ ສາມາດສ້າງຂຶ້ນໄດ້ດ້ວຍມືເຮົາເອງ

ຫລັກປະກັນຂອງໄຊຊະນະ ໃນການຕໍ່ສູ້ໃຫ້ໄດ້ມາ
ຊຶ່ງໃນການເມືອງຍຸກໃໝ່ ມີຕໍ່ລົງໄປນີ້ ຄື

-1-ແນວທາງຄວາມຄິດອັນຖືກຕ້ອງ -ໃຫ້ສອດຄ່ອງກັບຄວາມເປັນຈິງຂອງຍຸກຂອງສມັຍແລະສະພາວະຄວາມຈິງຂອງປະເທດລາວ

ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນລາວ ນັ້ນຄື ທຸກຢ່າງເລີ່ມ ຈາກຄວາມເປັນຈິງ ມຸ້ງຫາສັດຈະ ຈາກຄວາມເປັນຈິງ

-2-ແນວທາງປະຕິບັດໃຫ້ຖືກຕ້ອງ ແລ້ວມຸ້ງສ້າງອຳນາດໃໝ່ ດ້ວຍການເສີມສ້າງ ທາງປັນຍາຫລັກໆ ຄື ການຈູດໄຟໃຊ້ປັນຍາ ເອົາສິນທັມນຳໜ້າ ພ້ອມຕິດອາວຸດໃນ ຄວາມຄິດແລະປັນຍາ ເປັນຕົ້ນ

-3-ການນຳທີ່ຖືກຕ້ອງ -ຕ້ອງເດີນຕາມແນວທາງມວນຊົນ ໃຫ້ເຊື່ອໝັ້ນມວນຊົນ ແລະອາໃສມວນຊົນ ເປັນອັນນຶ່ງອັນດຽວກັນກັບມວນຊົນ ໃຫ້ເປັນທຳນອງທີ່ເປັນປະ ຊາທິປະໄຕ ໃຫ້ມີການນຳແບບຣວມໝູ່

-4-ຍຸດທະສາດທີ່ຍືກຍັກພິກໃຫວ ຍຸດທະສາດຫລັກໆ ຄື ຕ້ອງຣຸກ-ຕ້ອງຍັນ ປັ່ນສມອງຂຍາຍຄວາມຄິດ-ແລ້ວຣຸກຂຍາຍສະການມວນຊົນ ເສີມສ້າງ ເພີ້ມອຳນາດການສວ່ນປະຊາຊົນຢ່າງຕໍ່ເນື່ອງ

-5-ຍຸດທະວິທີຍືກຍັກ ພິກໃຫວ-ມຸ້ງໃຫ້ການເຄື່ອນໃຫວຕໍ່ສູ້ ແລ້ວຣຸກຣົບໃນທຸກ ແນວຣົບໃນທຸກຂັ້ນຕອນ ແລະໃນທຸກໆດ້ານ ເພື່ອໃຫ້ປະສົບໄຊຊະນະທຸກໆຄັ້ງໄປແລ້ວ ເສີມສ້າງສັກກະຍາພາບຂອງບຸກຄະລາກອນຣະດັບຕ່າງ ໆ ໃຫ້ແກ່ຂບວນການ ການ ເມືອງສວ່ນປະຊາຊົນ ໂດຍຣວມຢ່າງທົ່ວທຸກດ້ານ

-6-ມວນຊົນເຂັ້ມແຂງ-ຄື ເປັນນວ່ຍຕໍ່ສູ້ທີນຶ່ງ-ແລ້ວເຄື່ອນໃຫວພາຍໃຕ ຂອງຜູ້ນຳ ຂອງຂບວນການລາວອິສຣະ ເພື່ອປະຊາທິປະໄຕໂດຍຕຣົງ

-7-ມວນຊົນພ້ອມພຽງຄືເປັນນວ່ຍຕໍ່ສູ້ທີສອງ-ພ້ອມທີ່ຈະເສີມເຂົ້າໄປໃນຂບວນ ການພາຍໃຕ້ການນຳຂອງລາວອິສຣະ ເມື່ອສະການະການຮຽກຮ້ອງຕ້ອງການ

-8-ມວນຊົນສນັບສນູ-ຄື ເປັນນວ່ຍຕໍ່ສູ້ທີສາມ-ໃຫ້ການສນັບສນູນ ຊ່ວຍເຫລືອໃນດ້ານຕ່າງ ໆຢ່າງກວ້າງຂວາງ ໃນທຸກສິ່ງທຸກຢ່າງ

ທີ່ຂບວນການຂອງສວ່ນປະຊາຊົນ ຮຽກຮອ້ງຕອ້ງການ-ອັນເປັນປັດໃຈຊີ້ຂາດ

-9-ມະຕິຂອງມະຫາຊົນທົ່ວ ໆໄປ ຍອມຮັບ ເຫັນດວ້ຍແລະເຂົ້າໃຈ-ດວ້ຍການ ນຳສເນີຂອງສີ່-ນັກວິຊາການ

(18) ເຈົ້າໜາ້ທີ່ຣັຖ ຂາ້ຣາຊການ-ທັງກຸ່ມບຸກຄົນໃນສັງກັດໜວ່ຍງານ ຂາ້ຣາຊການ ໃນໂຄງການຣັຖ-ໃຫ້ຕັດສິນໃຈ-ໃນການເລືອກເສັ້ນທາງ-ຂາ້ງ-ມີສອງທາງ-ຄື ເສັ້ນທີ ນຶ່ງ ເປັນເສັ້ນຣະບອບປະຊາທິປະໄຕ-ທີ່ໃຫ້ສິດທິແກ່ປະຊາຊົນ-ເສັ້ນທີສອງ-ຄື ຣະບອບ ຜເດັດການຄອມມີນິສວຽດນາມ ທີ່ໃຊອຳນາດຂົ່ມຂູ່ປະຊາຊົນທີ່ບໍ່ມີສິດໃຫ້ແກ່ປະຊາຊົນ

ຜູ້ຢູ່ຝາ່ຍຕົງກັນຂາ້ມສຳນຶກຜິດ ຮູ້ສຶກຣະອາຍໃຈ ຕອ້ງການທຳບຸນແກ້ບາບ ເປັນປັດໃຈເສີມ ດວ້ຍຄວາມສເມີພາບ ຕອ້ງປຽ່ນເສັ້ນທາງ ດວ້ຍປັນຍາ

ວິກິດ-ຄື-ໂອກາດ-<br>ນັກປາດຄວນໃຊ້ປັນຍາ<br>ປະເທດລາວເຮົາ-ວິກິດສຸດ-ກໍ່ເປັນໂອກາດສຸດ-ຄືກັນ<br>ໂອກາດອັນໃດ-ຄື-ໂອກາດປຽ່ນແປງໄປສູ່ສິ່ງໃໝ່ ໆ ທີ່ດີອັນມີສົນທັມ

ອັນນີ້ ກາ້ເຮົາເຂົ້າໃຈປະກົດການ ວາ່ເປັນໂອກາດເຮົາຈະໄດ້ບໍ່ທຸກບໍ່ຄຽດບໍ່ບຽດ ສີໃຈ ຈິ່ງເກີນໄປໃຫ້ມີສະຕິປັນຍາຊວ່ຍ ໃຫ້ການປຽ່ນແປງຜາ່ນໄປ ສູ່ພາວະໃໝ່ທີ່ດີ ບໍ່ໃຫ້ເກີດຂຶ້ນໂດຍເຈັບປວດນອ້ຍທີ່ສຸດ ແລະໃຫ້ສູນເສັຽນອ້ຍທີ່ສຸດ ຫຼື ບໍ່ສູນເສັຽເລີຍ ໃຫ້ໃຊ້ໂຄງການນີ້

(ກ) ຕາມປົກກະຕິວິກິດ ນຳໄປສູ່ສົງຄາມ ມີດັ່ງນີ້

ຕາມປົກກະຕິ ໃນປະເທດໃດປະເທດນຶ່ງ ເມື່ອວິກິດສຸດ ຈິ່ງບໍ່ມີທາງໄປກໍ່ຈະເກີດສົງ ຄາມ ຫຼື ສົງຄາມກາງເມືອງ ເຊັ່ນ ສົງຄາມກາງເມືອງຂອງສະຫະຣັຖ ຫຼືທີ່ເຍີຣະມັນ ແລະຍີປຸ່ນເຂົ້າສູ່ສົງຄາມມີຄົນຕາຍຫລາຽ ແລະທຳໃຫ້ຄົນຕາຍຫລາຽສິບລາ້ນຄົນ

ການເພ້ສົງຄາມຂອງເຢັຣະມັນ ແລະຍີປຸ່ນເປັນວິກິດສຸດໆ ຂອງປະເທດຂອງເຂົາ ແຕ່ຫລັງຈາກເພ້ສົງຄາມແລ້ວ ປະກົດວ່າເຢັຣະມັນແລະຍີປຸ່ນໄດ້ມີຄວາມຈະເຣີນ ຢ່າງຣວດເຣັວ ເພາະການເພ້ສົງຄາມເປັນໂອກາດແກ້ບັນຫາ ທີ່ຕາມປົກກະຕິແລ້ວແກ້ບໍ່ໄດ້ ເພາະໄດ້ນຳປະເທດທັງສອງເຂົ້າໄປສູ່ສົງຄາມ

ສຳຫລັບປະເທດລາວເຮົາ ຊຶ່ງວິກິດຫລາຽຂຶ້ນເຣື້ອຍໆ -ຈົນເກືງ -ວິກິດທີ່ສຸດໃນໂລກ ແຕ່ມີຜູ້ຕັ້ງຄຳການກັນມາຫລາຽແລ້ວວ່າ ? ເຮົາຈະພົ້ນວິກິດດວ້ຍວິທີໃດ ໂດຍບໍ່ຕອ້ງນອງເລືອດຢ່າງໃດ ແລະກໍ່ເບິ່ງບໍ່ເຫັນວ່າຈະບໍ່ນອງເລືອດໄດ້ຢ່າງໃດ -ອາດຈະເປັນບຸນຂອງປະເທດເຮົາ -ບຸນນັ້ນຊຶ່ງເກີດຈາກເຫດປັນຈັຍ ສະເພາະບາງຢ່າງ ປະເທດຂອງເຮົາຈະກຳລັງຜ່ານ ສະພາວະວິກິດສຸດ ໄປສູ່ສິ່ງໃໝ່ໆທີ່ດີ ບໍ່ຕອ້ງຄອງຕາຍແລະບໍ່ຕອ້ງມີການໄປສັມມະນາ ອີກດວ້ຍ

(ຂ) ບັນຫາວິກິດການ ປະເທດລາວ ມີດັ່ງນີ້

ສັງຄົມລາວບໍ່ສາມາດແກ້ບັນຫາຫລັກ ໆນັ້ນ ອັນໄດ້ແກ່ຄວາມຍາກຈົນແລະຄວາມຍຸຕິທັມ ໃນສັງຄົມຊ່ອງວ່າງຣະຫວ່າງ ຄົນຈົນກັບຄົນຣວຍທາງກວ້າງຫລາຽຂຶ້ນ ກໍ່ໃຫ້ເກີດປຽບແລະສໍ້ສົນເພີ້ມຂຶ້ນທຸກວົງການ ເປັນວິກິດການທາງສິນທັມທີ່ບີບຄັ້ນຄົນລາວຫລາຽຂຶ້ນໆ ຢ່າງເບນບໍ່ເຫັນທາງອອກ ເຄື່ອງມືຕ່າງ ໆເຊັ່ນ ໂຄງການຣັກ ຄື ຣະບົບການສຶກສາ ຣະບົບການເມືອງເບິ່ງແລ້ວ ບໍ່ມີນ້ຳຢາທີ່ຈະແກ້ໄຂສະພາບວິກິດ ຫຼື ຕົວເອງກໍ່ໃຫ້ເກີດບັນຫາວິກິດຫລາຽຂຶ້ນ ຢ່າງທີ່ເອີ້ນວ່າການເມືອງນ້ຳເນົ່າ ມັນກໍ່ວົນວຽນຢ່າງນັ້ນແລະຊົ່ວຣ້າຍກວ່າເດີມ ອັນທີ່ເຄີຍປະຕິວັດມານັ້ນ ກໍ່ເຮັດກັນມາຫລາຍຄັ້ງ ຈົນຮອດຄັ້ງແນວລາວແລະວຽດນາມຄອມມິນິສ ອັນວ່າຣັກທັມນູນແລະສານປະຊາຊົນ ກໍ່ຕັ້ງກັນມາຫລາຽຍຸກຫລາຽສມັຍ ເອີ້ນວ່າລອງເບິ່ງກັນມາເບີດທຸກຢ່າງແລ້ວ ກໍ່ບໍ່ຫາຍວິກິດ ອັນນັ້ນແຫລະທີ່ເອີ້ນວ່າວິກິດສຸດໆ ຫຼືວິກິດທີ່ສຸດໃນໂລກ ຈົ່ນບໍ່ມີທາງໄປໃນພາວະເດີມ -ອັນນີ້ແລ້ວຈຶ່ງວ່າມີຄຳປຽນແປງໄປສູ່ສະພາບໃໝ່ ໃນຣະບອບປະຊາທິປະໄຕ ອັນມີສິນທັມ

## (ຄ) ພະລັງອຳນາດທາງສັງຄົມ

ເຮົາຮູ້ຈັກຢູ່ ກັບພະລັງອຳນາດ -2- ປະເພດ ຄື

-1- ພະລັງອຳນາດຮັກ - ຄື - ຮັກກາບຸພາບ - ໃຊ້ກົດໝາຍແລະກຳລັງຕິດອາວຸດ ຄື ທະຫານແລະຕຳຣວດ

-2- ພະລັງອຳນາດເງິນ - ຄື - ທະນານຸພາບ - ໃຊ້ເງິນເປັນອຳນາດ - ໃຊ້ອຳນາດເປັນກົດໝາຍ - ຊຶ່ງອາດຄອບງຳອຳນາດຮັກໄດ້ດ້ວຍ

ເວົ້າເຖິງທັງສອງອຳນາດນີ້ ປະສົບຄວາມລົ້ມເຫລວໃນການກຳຈັດຄວາມບໍ່ຖືກຕ້ອງເປັນທັມ ຫຼືກັບເປັນບັນຫາເສັຽເອງ - ໃນສັງຄົມສມັຍໃໝ່ທີ່ຊັບຊ້ອນການໃຊ້ອຳນາດເກືອບຈະແກ້ບັນຫາອັນໃດບໍ່ໄດ້ເລີຍ ແຕ່ກັບສ້າງບັນຫາຫລາຍຂຶ້ນດັ່ງທີ່ການປະຕິວັດທາງການເມືອງຂອງແນວລາວ ຫຼືການທີ່ໃຊ້ອຳນາດຂນາດໃຫ່ຽເຂົ້າມາຍຶດອຳນາດຮັກກໍ່ແກ້ບັນຫາອັນໃດບໍ່ໄດ້ ແຕ່ກັບມາເປັນບັນຫາໃຫ່ຽເສັຽເອງ

ມີພະລັງອຳນາດອີກແບບນຶ່ງ - ທີ່ເຮົາບໍ່ເຄີຍຮູ້ຈັກກັນນັ້ນກໍ່ ຄື ພະລັງອຳນາດສັງຄົມ ຫຼື ສັງຄົມມານຸພາບ

ອຳນາດສັງຄົມຍຸຕິຄວາມຊົ່ວຮ້າຽທັງປວງ ຕົວຢ່າງຕໍ່ໄປນີ້

(1) ໃນສມັຍກ່ອນໂຈນປຸ້ນເອົາງົວເອົາຄວາຍຊຸກຊຸມ ໂຈນປຸ້ນງົວຄວາຍເປັນຄົນກຸ່ມນ້ອຍໆ ມີປືນແກບປຸ້ນຄວາຍຊາວບ້ານ ກໍ່ຄວາມເດືອດຮ້ອນທົ່ວໄປ ເຈົ້າໜ້າທີ່ບ້ານເມືອງແກ້ໄຂບໍ່ໄດ້ ຕໍ່ເມື່ອຊາວບ້ານທັງຫລາຍແລະໝູ່ບ້ານນ້ອຍໃຫ່ຽ ຮ່ວມຕົວກັນຈັດເວັນຍາມຕີກະລໍເຄາະໂມໃນເມື່ອໂຈນມາ ພວກຊາວບ້ານຕື່ນຂຶ້ນມາພ້ອມກັນທັງໝູ່ບ້ານ ໂຈນກໍ່ທຳອັນໃດບໍ່ໄດ້ ການທີ່ຊາວບ້ານຮ່ວມຕົວກັນທັງໝູ່ບ້ານນັ້ນແຫລະ ຄື ອຳນາດສັງຄົມຫຼື ອຳນາດແຫ່ງການຮ່ວມຕົວກັນ

(2)ທີ່ປະເທດລາວເຮົາມາເວົ້າຍ້ອນຫລັງໄປໃນ -20 -30 -ກວ່າປີມານີ້ ຊາວບ້ານຊາວເມືອງເດືອດຮ້ອນຫລາຍ ເນື່ອງມາຈາກທາງພັກຣັກບໍາເອົາປະຊາຊົນໄປສົມມະນາແລະການທີ່ມີການຍຶດຊັບປະຊາຊົນຂນາດໃຫ່ຽ ເຂົ້າມາໄຊ້ອໍານາດທາງຜເດັດການຕາ່ງຊາດຫລາຽກວ່າປະຊາຊົນ ຕໍ່ມາຊາວບ້ານຮວ່ມຕົວກັນສາ້ງຄວາມປອ້ງກັນ ແຕ່ບໍ່ໄດ້ຜົນເພາະຍອ້ນພັກຣັກໄຊ້ອໍານາດເງີນກິດໝາຽຈົ່ນຮອດນໍາປາຍປືນມາໄຊ້ ຊາວບ້ານຍັງບໍ່ພົ້ນຈາກຄວາມຍາກຈົນ ອໍານາດແຫ່ງຮວ່ມຕົວກັນຫຼືຄວາມເປັນສັງຄົມ ທໍາໃຫ້ຄວາມບໍ່ດີຍຸຕິລົງ

(3)ທີ່ປະເທດລາວເຮົາມີກຸ່ມລັກລອບຕັດໄມ້ເອົາໄປຂາຍໃຫ້ຕາ່ງຊາດ ພອ້ມທັງຂາຍຊັພຍາກອນທັມມະຊາດຂອງລາວ ຄື ບໍ່ເພດບໍ່ຄໍານຶງເຖິງສາ້ງເຂື່ອນຕາ່ງ ໆ ເສັຽພື້ນທີ່ໄຮ່ນາໃນການທໍາມາຫາກິນຂອງປະຊາຊົນ ຄົນທີ່ທໍາລາຍຊັບຕາ່ງ ໆ ນີ້ແມ່ນມີອໍານາດມາຈາກກໍາລັງເຈົ້າໜາ້ທີ່ຣັກ ແຕ່ຝາ່ຍເຈົ້າໜາ້ທີ່ຂອງຣັກເປັນຄົນທີ່ດີນັ້ນຈຶ່ງຖືກຂາ້ຕາຍແຕ່ເມື່ອພວກໂຈນຂອງຣັກຕັດໄມ້ແລະທໍາລາຍຊັພຍາກອນຕາ່ງ ໆ ນັ້ນໂຈ່ນກຸ່ມນີ້ແມ່ນໄຊ້ອໍານາດຣັກບໍ່ມີຜິດກົດໝາຽ

ອັນນີ້ຈຶ່ງກາ່ວໄດ້ວາ່ ອໍານາດສັງຄົມ ຫຼື ອໍານາດແຫ່ງການຮວມຕົວຂອງປະຊາຊົນ ຄື ເຄື່ອງຍຸຕິທັມ ຄວາມຊົ່ວຮາ້ຽທັງປວງ

ສັງຄົມຄື ຜູ້ກໍາກັບຄວາມຖືກຕອ້ງ ເຊັ່ນຕົວຢາ່ງ

ກ -ເມື່ອຄັ້ງພຸທກາລ ພຣະທີ່ກຸງໂກສໍາພີແບ່ງເປັນສອງພວກທະເລາະກັນຍືດເຍື້ອທໍາຢາ່ງຊົ່ວໆ ກໍ່ບໍ່ຢຸດ -ພຣະພຸທອົງສະເດັດໄປຊົງຫາ້ມກໍ່ບໍ່ເຊື່ອ ແກມຍັງວາ່ພຣະພຸທເຈົ້າເສັຽອີກ ພຣະບໍຣົມສາສດາຈຶ່ງສະເດັດຫລີກເຂົ້າປາ່ປາລີໄລໄປ ຕໍ່ມາຊາວບ້ານຣໍາຄານຢຸດໃສ່ບາດພຣະທັງນັ້ນ ທັງສອງຝາ່ຍຈຶ່ງໝົດກໍາລັງຢຸດທະເລາະ -ເຣື່ອງນີ້ສະແດງໃຫ້ເຫັນວາ່ ແມ່ນແຕ່ພຣະສາສດາຂອງພຣະເຫລົ່ານັ້ນເອງ ຍັງຍຸຕິຄວາມຂັດແຍ້ງບໍ່ໄດ້ແຕ່ສັງຄົມຄືຊາວບ້ານທັງຫລາຽສາມາດທໍາໄດ້

ຂ -ຄົນເຮົາຈາກທຸກປະເທດຈະ ຈະເຣີນຫຼືບໍ່ຈະເຣີນຢາ່ງໃດ ກໍ່ໄດ້ໄປເລັ່ນເປະບານກັນໄດ້ທົ່ວໂລກ ເພາະໃນການເລັ່ນເປະບານຕອ້ງມີຂອບກົດແລະກົດຣະບຽບຊັດເຈັນມີຜູ້ກໍາກັບເສັ້ນດູແລໃຫ້ເລັ່ນຢູ່ໃນຂອບ ນິກັມມະການ

ກໍາກັບໃຫ້ເລັ່ນຕາມກົດກະຕິກາ ກັມມະການແລະຜູ້ກໍາກັບເສັ້ນອາດໂກງໄດ້ ແຕ່ໂກງບໍ່ໄດ້ເພາະມີຄົນເບິ່ງຄອຍກໍາກັບຢູ່ອີກທີນຶ່ງ ຄົນເບິ່ງຄືສັງຄົມຄອຍກໍາກັບຄວາມກືກຄອ້ງ

ຜູ້ມີອໍານາດໃດ ໆບໍ່ວ່າອໍານາດຣັຖ ອໍານາດເງິນ ຫຼືກັມມະການຫຼືແມ່ນແຕ່ພຣະອາດໂກງໄດ້ສເມີ ຖ້າບໍ່ມີສັງຄົມຄອຍກໍາກັບ ອໍານາດສັງຄົມຄືອໍານາດທີ່ກໍາກັບ ທໍາໃຫ້ເກີດຄວາມກືກຕອ້ງ ອັນນີ້ເປັນຂໍ້ທີ່ເຮົາຈະຕອ້ງການໃຈ ວ່າຈະບໍ່ໄປຮຽກຮອ້ງຜູ້ນໍາອໍານາດໃດ ໆໃຫ້ເຂົ້າມາແກ້ບັນຫາ ເພາະບໍ່ສາມາດແກ້ບັນຫາໄດ້ ແຕ່ອໍານາດສັງຄົມນັ້ນແຫລະ ທີ່ຈະເປັນກໍາລັງເກີດຄວາມກືກຕອ້ງ

(1)ຂບວນການລາວອິສຣະ ເພື່ອປະຊາທິປະໄຕ

ຂບວນການລາວອິສຣະ ກັບຣະບອບຄອມມິນິສວຽດນາມ ເປັນຕົວຢ່າງໃຫ້ເຮົາຮຽນຮູ້ຢ່າງເປັນຮູບທັມ ເຖິງພະລັງອໍານາດທາງສັງຄົມຣະບອບຄອມມິນິສ ຄົງຈະມີທັງຄຸນແລະໂທດສຸດແຕ່ຜູ້ເບິ່ງ ແຕ່ທີ່ແທ້ ໆນັ້ນ ກໍ່ຄືຣະບອບຄອມມິນິສຊຶ່ງພະລັງອໍານາດມະຫາສານຄອມມິນິສຍານຸພາບນີ້ບໍ່ມີອົງກອນ ຫຼືສະຖາບັນໃດ ໆຈະຕາ້ນທານໄດ້ ຂບວນການລາວອິສຣະ ເພື່ອປະຊາທິປະໄຕ ຈະກືກຫຼືຜິດແລ້ວແຕ່ຜູ້ເບິ່ງ ແຕ່ທີ່ແທ້ ໆແລ້ວ ຄືເປັນການຣວມຕົວຂອງມະຫາຊົນ ອັນຫລາກຫລາຍຈໍານວນຫລາຍແສນຫລາຍລາ້ນເປັນພະລັງທາງສັງຄົມ ທີ່ທໍາໃຫ້ວຽດນາມຄອມມິນິສຍານຸພາບແມ່ນຊຶ່ງມະຫິທານຸພາບພຽງໃດ ກໍ່ອອ່ນກໍາລັງແລະເປີດໂອກາດໃຫ້ກະບວນການຍຸຕິທັມແລະສານປະຊາຊົນເຂັ້ມແຂງຂື້ນ

ການທີ່ຂບວນການ ການເມືອງສວນປະຊາຊົນເຕີບໂຕເຂັ້ມແຂງຂື້ນໄດ້ ສວ່ນນຶ່ງເກີດຈາກວິກິດສຸດ ໆທີ່ບໍ່ມີທາງໄປແລະອີກສວ່ນນຶ່ງ ເກີດຈາກມີຄົນຢ່າງຝາ່ຍແນວລາວຮັກຊາດແລະຝາ່ຍວຽດນາມ ຂບວນການຂອງສວ່ນປະຊາຊົນກໍ່ຈະບໍ່ເຕີບໃຫ່ຽໂຕຢ່າງນີ້ ການທີ່ຄົນໃນຊາດຣວມຕົວກັນເປັນສັງຄົມເຂັ້ມແຂງ ເປັນເຣື້ອງທີ່ເກີດຂື້ນໄດ້ຍາກ ແຕ່ຖາ້ເກີດຂື້ນເປັນທຶນທາງສັງຄົມອັນຍິ່ງໃຫ່ຽຈະຕອ້ງດີ

ການຣວມຕົວເປັນອັນນຶ່ງອັນດຽວກັນຂອງປະຊາຊົນຈໍານວນຫລາຽ

ເກີດຈາກການມີເປົ້າໝາຍຮ່ວມປະຊາຊົນ ຄວນຈະຮວມຕົວຮ່ວມໃຈໃຊ້ແນວຄິດແລະປັນຍາ ມາຮ່ວມເຮັດໃນທຸກພື້ນທີ່ໃນທຸກອົງການແລະໃນທຸກເຣື້ອງ ມັນຈະເກີດເປັນປະຊາສັງຄົມຫຼືສັງຄົມເຂັ້ມແຂງໄດ້

ສັງຄົມເຂັ້ມແຂງນັ້ນແຫລະ ຄືປະຊາທິປະໄຕໂດຍສາຣະໃນຄະນະທີ່ໂຄງການທາງການເມືອງ ອາດເປັນພຽງຮູບແບບ-ກໍ່ປະເທດໃດທີ່ມີສັງຄົມເຂັ້ມແຂງ ເສຖກິດຈະດີໄດ້ ແລະສິນທັມຈະດີໄດ້ ອັນນີ້ເປັນສັດຈະຊຶ່ງສາມາດຕຣວດຊອບ ຈາກຫລັກການຂໍ້ເທັ້ຈິງຈາກທົ່ວໂລກ

(2)ຂບວນການມະຫາປະຊາຊົນເພື່ອທັມມາທິປະໄຕ-ປະຊາທິປະໄຕ

ຂບວນການລາວອິສຣະ ຄົງຈະມີທຳຜິດແນ່ ແຕ່ພາບຮວມຄືຂບວນການປະຊາຊົນຂນາດໃຫ່ຽ ທີ່ຕຣວດສອບອຳນາດທາງການເມືອງ ການເມືອງສວ່ນປະຊາຊົນກໍ່ທະໜອມບຳຣຸງຫຼໍ່ລຽ້ງໃຫ້ເຕີບໂຕແຂງແຮງ ມີຄວາມກົ້ກຕອ້ງກໍ່ຈະເປັນພະລັງທາງສິນທັມອັນຍິ່ງໃຫ່ຽ ທີ່ກຳກັບຕຣວດສອບແລະສົ່ງເສີມໃຫ້ເກີດຄວາມກົ້ກຕອ້ງທຸກດ້ານ ທັງການເມືອງ ສັງຄົມ ເສຖກິດ ສິ່ງແວດລອ້ມ ການສຶກສາ ການພັທນາຈິດໃຈແລະສັນຕິວິທີ

ການເມືອງສວ່ນປະຊາຊົນນັ້ນ ຕອ້ງເປັນພະລັງທາງຈິດສຳນຶກ ພະລັງທາງຄວາມຮູ້ ພະລັງທາງການສື່ສານ ພະລັງທາງສັງຄົມຊຶ່ງກໍ່ທຳໄດ້ ທັມມາທິປະໄຕກັບປະຊາທິປະໄຕ ຈະເຂົ້າມາສົມທົບກັນປະຊທິປະໄຕກັບທັມມາຈະຕອ້ງປະສົມກັນ

ຂບວນການມະຫາປະຊາຊົນ ເພື່ອທັມມາທິປະໄຕ ປະຊາທິປະໄຕ ຈະເປັນປະການອັນແຂງແກ່ນ ທີ່ທຳໃຫ້ການເມືອງດີແລະຂບວນການຍຸຕິທັມແລະສານປະຊາຊົນແຂງແຮງຮ່ວມກັບທັງສິ່ງດີ ໆອື່ນ ໆເກີດຕາມມາ

ພຣະທັມ ຄວນຈະຢູ່ກັບຈຸດແຂງຂອງ ພຣະທັມ-ຄື ສ້າງຂບວນການມະຫາປະຊາຊົນເພື່ອປະຊາທິປະໄຕ ຫລາຽກວ່າເຂົ້າໄປສູ້ໂຄງການແລະຮູບແບບທາງການເມືອງຊຶ່ງຈະເປື້ອງຕົວແລະທຳໃຫ້ຕົວເອງອອ່ນແອລົງ ຂບວນການມະຫາປະຊາຊົນ ເພື່ອປະຊາທິປະໄຕ

ປະຊາທິປະໄຕ ຈະໄປເຮັດໃຫ້ເກີດໂຄງການແລະຮູບແບບທາງການເມືອງ ຕອ້ງປັບຕົວໄປສູ່ປະຊາທິປະໄຕເອງ ສິ່ງການຈະຈ່າຍອຳນາດໄປຢ່າງທົ່ວເຖິງ ແລະທຸກສວ່ນຂອງສັງຄົມ ຈະປະຕິບັດພັນດວ້ຍການຮຽນຮູ້ແລະຕຣວດສອບ ຊຶ່ງກັນແລະກັນ ແທ່ນທີ່ການໃຊ້ອຳນາດຈາກເທິງລົງລຸ່ມແບບແຍກສວ່ນຕົວ ຊຶ່ງເປັນການເມືອງແບບເກົ່າ ປະຊາທິປະໄຕຈະກາຍເປັນວັທທັມ ທີ່ເຂົ້າມາຢູ່ເໜືອໂຄງການທາງການເມືອງ

3-ຄວາມມຸ້ງໝັ້ນຮວ່ມກັນຂອງຄົນລາວທັງມວນທີ່ກະທຳຂອງແກວຊົງມາໄດ້-33-ປີ

ການທີ່ປະເທດໃດປະເທດນຶ່ງ ຈະມີການປະຕິວັດປະຊາທິປະໄຕ ໂດຍມວນຊົນ ດວ້ຍສັນຕິວິທີນັ້ນເກີດຂຶ້ນໄດ້ຍາກ ແຕ່ໂອກາດກຳລັງຢູ່ຕໍ່ໜາ້ເຮົາແລ້ວ ດວ້ຍລັກສະນະພິເສດຂອງຄົນລາວ ທຳໃຫ້ການປະຕິວັດດວ້ຍສັນຕິວິທີເປັນໄປໄດ້ ແລະກາ້ເປັນສັກສີອັນຍິ່ງໃຫ່ຽຂອງຄົນລາວເຮົາເປັນຄົນທີ່ຈະເຣີນແລະມີປັນຍາ

ຄົນລາວເຮົາເໝືອນໄກ່ຢູ່ໃນກະທໍ່ຂອງແກວ ຂະນະທີ່ຣໍຄວາມພິນາດຕໍ່ຊີວິດ ຈະມາເຖິງດວ້ຍກັນທັງໝົດທັງຊີ້ນ ແລະຍັງຕອດຕີກັນຕໍ່ໄປທີ່ຕອດຕີກັນນັ້ນ ເພາະໃນກະທໍ່ນັ້ນມັນຄັບແຄບບີບຄັ້ນ ຈິ່ງທຳໃຫ້ກະທົບກະທັ້ງກັນ

ກະທໍ່ນັ້ນຄືຣະບອບຜເດັດການອັນຄັບແຄບ ແລ້ວຕອ້ງຮວມຕົວກັນບິນອອກຈາກກະທໍ່ນັ້ນ ຄື ມາສາ້ງຣະບົບປະຊາທິປະໄຕການປະຕິວັດປະຊາທິປະໄຕ ໂດຍຄົນລາວທັງມວນສາມາດເຮັດໄດ້ດວ້ຍສັນຕິວິທີ ບໍ່ມີການຍຶດອຳນາດຫຼືການຂາ້ເທາງເທງໃສ່ ແລະໃຊ້ອຳນາດປາຍປືນອັນໃດໃຜໆທັງຊີ້ນ ແຕ່ໂດຍຄົນລາວມີສຳນຶກປະຊາທິປະໄຕ ແລ້ວຮວມຕົວກັນເປັນເຄືອຂາ່ຍປະຊາຊົນ ເພື່ອປະຊາທິປະໄຕທີ່ເຊື່ອມໂຍງກັນຕັ້ມປະເທດ ໂດຍບໍ່ຕອ້ງຣໍຣັກທັມນູນແລະສານປະຊາຊົນ ເພາະປະຊາທິປະໄຕມາກອ່ນຣັກທັມນູນແລະສານປະຊາຊົນ ຣັກທັມນູນແລະອົງການທາງການເມືອງ ທີ່ຈະເກີດຂຶ້ນຕາມມາເປັນຣະບົບ ພາຍໄຕ້ຣະບອບປະຊາທິປະໄຕ

ຂບວນການມະຫາປະຊາຊົນເພື່ອປະຊາທິປະໄຕ-ປະຊາທິປະໄຕ ເປັນຂບວນການທີ່ໃຜ ໆກໍ່ເຂົ້າຮວ່ມໄດ້

ເພາະບໍ່ໄດ້ເປັນສັດຕຣູກັບໃຜ ໆ ແລະບໍ່ໄດ້ໂຄ່ນລົ້ມອັນໃດໃຜ ແຕ່ເປັນການທີ່ປະຊາຊົນຈັບ ມືກືແຂນກັນ ສະຖາປະນາຣະບອບປະຊາທິປະໄຕ ຂຶ້ນເອງດ້ວຍສັນຕິວິທີແລະປັນຍາ

ໂອກາດຢູ່ຕໍ່ໜ້າເຮົາແລ້ວ ທີ່ຈະຣວ່ມກັນປຽ່ນແປງໄປສູ່ສິ່ງໃໝ່ ໆ ທີ່ດີໃນຣະບອບປະ ຊາທິປະໄຕອັນມີທັມມະນີ້ ຄວາມຢູ່ເຢັນເປັນສຸກຣວ່ມກັນເປັນເຣື້ອງບໍ່ຍາກ ຍຸກສີອາຣີຍະ ທີ່ຄົນລາວໃຝ່ຝັນກັນມາຫລາຽດົນນານຈະເປັນຈິງໄດ້

ປະເທດລາວທີ່ເຂັ້ມແຂງເປັນທັມແລະມີສານປະຊາຊົນເປັນຈິງ ໆ ນອກ ຈາກປະໂຍດຂອງຕົວເອງແລ້ວຍັງຊວ່ຍຊາວໂລກໄດ້ດວ້ຍ ເພາະລວ້ນ ເປັນເພື້ອນມະນຸດຣວ່ມໂລກດວ້ຍກັນ

ໂຄງການການເມືອງລາວຍຸກໃໝ່ ໃນຣະບອບປະຊາທິປະໄຕ ສວ່ນປະຊາຊົນນີ້ ແມ່ນມາຈາກສະຕິປັນຍາ ມາຈາກຈິດໃຈອັນຜອ່ງສັຍ ຂອງຄົນລາວ ສິນທັມມາຈາກ ຄວາມນັບຖືແລະຊື່ຕົງ ປະຊາຊົນສວ່ນໃຫ່ຽ ຄວນຈະມີອຳນາດເທົ້າທຽມນັກການ ເມືອງ ເພື່ອສາ້ງສັງຄົມໃໝ່ ສາ້ງຈິດໃຈໃໝ່ ສາ້ງອຳນາດ ເພື່ອໃຫ້ປະຊາຊົນ ໄດ້ເປັນເຈົ້າພາບເຈົ້າສັດທາເມືອນດັ່ງນາ ໆ ປະເທດທີ່ຈະເຣີນໃນໂລກ ຄວາມ ມຸ້ງຫວັງຂອງປະຊາຊົນລາວ ຢາກເຫັນຄວາມກືກຕອ້ງປອງດອງຊາດ ນັກປາດນັກສິນທັມ ນັກຣອ້ງນັກລຳຄວນຈະທັມຄວາມດີໃຫ້ມີສີ ແກ່ຕົນ ເພື່ອອະນາຄົນຂອງຕົນແລະຂອງລູກ ໆ ຫລານໆ ກາ້ເຮົາ ສາ້ງຄວາມດີອະນາຄົດເຮົາຈະມີຄວາມດີ ທີ່ລູກຫລານຈະເຫັນ ຕົນເປັນຄົນຮັກຊາດນັກປາດອາຈານຈະກາ່ວວັຍໃນປະວັດສາດ ອັນເປັນຄວາມດີທີ່ເຮົາສາ້ງວັຍຕາຍໄປແລ້ວຄວນໃຫ້ມີປະວັດອັນດີງາມ

ຈາກສູນກາງ ສັນພູໝອກ ທີ່ນະຄອນວຽງຈັນ

ໃນນາມຜູ້ກໍ່ຕັ້ງຂບວນການລາວອິສຣະ ຍຸກໃໝ່

ທາ່ນຈອ່ຍ ອິສຣະ ລົງວັນທີ-25-5-00